ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

***********************

ສະມາຄົມ ມິດຕະພາບ
ລາວ-ຍີ່ປຸ່ນ ສູນກາງ

ເລກທີ 04 /ສມລ-ຍ
ນະຄອນຫລວງວຽງຈັນ, ວັນທີ15/05/2007

# ຂໍ້ຕົກລົງ

## ຂອງປະທານ ສະມາຄົມ ມິດຕະພາບ ລາວ-ຍີ່ປຸ່ນ
## ວ່າດ້ວຍການແຕ່ງຕັ້ງ ຄະນະສະມາຄົມ ອາດີດນັກສຶກສາລາວ
## ຈາກປະເທດຍີ່ປຸ່ນ ຊຸດທີ II

---------------

ອີງຕາມ ແຈ້ງການຂອງຫ້ອງວ່າການສູນກາງພັກ ສະບັບເລກທີ 629/ຫສພ, ລົງວັນທີ 05 ທັນວາ 1997 ກ່ຽວກັບການສ້າງຕັ້ງສະມາຄົມມິດຕະພາບ ລາວ-ຍີ່ປຸ່ນ ຢູ່ຂັ້ນແຂວງ ແລະກຳແພງນະຄອນວຽງຈັນ.

ອີງຕາມໃບສະເໜີ ຂອງສະມາຄົມ ອາດີດນັກສຶກສາລາວຈາກປະເທດຍີ່ປຸ່ນ ສະບັບເລກທີ II-003/ສອລຍ ລົງວັນທີ 17 ພະຈິກ 2006 ວ່າດ້ວຍການຂໍອະນຸມັດຮັບຮອງເອົາຜົນການເລືອກຕັ້ງ ແລະຕົກລົງແຕ່ງຕັ້ງຄະນະສະມາຄົມ ອາດີດນັກສຶກສາລາວຈາກປະເທດຍີ່ປຸ່ນ ຊຸດໃໝ່.

### ປະທານສະມາຄົມ ມິດຕະພາບ ລາວ-ຍີ່ປຸ່ນ ສູນກາງຕົກລົງ

ມາດຕາ 01: ແຕ່ງຕັ້ງປະທານ, ຮອງປະທານ,ກຳມະການ, ເລຂານຸການ ສະມາຄົມ ອາດີດນັກສຶກສາລາວຈາກປະເທດຍີ່ປຸ່ນ ຊຸດທີ II ຊຶ່ງປະກອບດ້ວຍບັນດາທ່ານດັ່ງລຸ່ມນີ້:

01. ທ່ານນາງ ປາລິນາ ເພັດສີລິແສງ, ອຳນວຍການ ເຮືອນພັກວິລາຫາດຫລວງ ເປັນປະທານ.
02. ທ່ານ ດຣ ບຸນລ້ອນ ດ້ວງເງິນ, ຮອງອຳນວຍການສູນຮ່ວມມືພັດທະນາຊັບພະຍາກອນມະນຸດ ລາວ-ຍີ່ປຸ່ນ ເປັນຮອງປະທານ
03. ທ່ານ ປັນຍາ ຈັນທະວົງ, ອາຈານສອນພາກວິສະວະກຳໄຟຟ້າ ມະຫາວິທະຍາໄລແຫ່ງຊາດ ເປັນຮອງປະທານ

04. ທ່ານ ສິທັດຖະ ຣາຊະພົນ, ປະທານບໍລິສັດ ບໍລິສັດການຄ້າ ແລະ ທີ່ປຶກສາສີໄຊ ເປັນກຳມະການ.

05. ທ່ານ ຈັນຊະນະ ສີຈັນທອງທິບ, ຮອງຫົວໜ້າພະແນກເສດຖະກິດຫ້ອງການ ຄະນະເລຂາ ທີ່ການລັດຖະບານສຳນັກງານນາຍົກ ເປັນກຳມະການ.

06. ທ່ານ ລັດສະດາກອນ ສຸດາຈັນ, ແປພາສາ ທຸລະກິດສ່ວນຕົວເປັນກຳມະການ.

07. ທ່ານນາງ ບົວສອນ ວົງຖາວອນ, ທີ່ປຶກສາດ້ານການບໍລິຫານບໍລິສັດການເງິນ ( Western Union Finance Service Inc) ເປັນເລຂານຸການ.

<u>ມາດຕາ 02:</u> ສະມາຄົມ ອາດີດນັກສຶກສາລາວຈາກ ປະເທດຍີ່ປຸ່ນ ແມ່ນເປັນສະມາຊິກ ລວມໝູ່ຂອງ ສະມາຄົມ ມິດຕະພາບ ລາວ -ຍີ່ປຸ່ນ ສູນກາງ.

<u>ມາດຕາ 03</u> ສະເໜີມາຍັງການຈັດຕັ້ງ ພັກ -ລັດ, ເອກະຊົນ ແລະ ຜູ້ທີ່ໄດ້ຮັບການແຕ່ງຕັ້ງ ຈົ່ງຮັບຮູ້ ແລະປະຕິບັດ ຕາມຂໍ້ຕົກລົງ ສະບັບນີ້ ຈົນກວ່າຈະມີການປ່ຽນແປງ.

<u>ມາດຕາ04:</u> ຂໍ້ຕົກລົງ ສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ສ່ວນເອກະສານອື່ນໆ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ປະທານສະມາຄົມ ມິດຕະພາບ ລາວ -ຍີ່ປຸ່ນ
ສູນກາງ

ສະມາຄົມ ມິດຕະພາບ ລາວ-ຍີ່ປຸ່ນ

ດຣ ປອນເມກ ດາລາລອຍ